ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0376 /ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 08 ເມສາ 2020

# ແຈ້ງການ

ເຖິງ: - ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

- ທ່ານ ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ.

ເລື່ອງ: ການອະນຸຍາດໃຫ້ສືບຕໍ່ດຳເນີນກິດຈະການຮ້ານຄ້າຂາຍຍົກ ແລະ ຮ້ານຄ້າຂາຍຍ່ອຍ ທີ່ຂາຍສິນຄ້າປະເພດສະບຽງອາຫານ ແລະ ອຸປະໂພກ-ບໍລິໂພກ.

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ການແຜ່ລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020;
- ອີງຕາມ ບົດແນະນຳ ວ່າດ້ວຍການຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ການແຜ່ລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 ສະບັບເລກທີ 020/ສກພ, ລົງວັນທີ 02 ເມສາ 2020;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດຂອງກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຮັບມືການແຜ່ລະບາດ ຂອງພະຍາດໂຄວິດ 19 ສະບັບເລກທີ 0358/ອຄ.ກຈພງ, ລົງວັນທີ 02 ເມສາ 2020.

ເພື່ອຜັນຂະຫຍາຍຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ການແຜ່ລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 ສະບັບເລກທີ 06/ນຍ ລົງວັນທີ 29 ມີນາ 2020. ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ, ການຕິດຕາມ, ການກວດກາ ແລະ ການຄຸ້ມຄອງ ຊຶ່ງໄດ້ກຳນົດໄວ້ໃນຂໍ້ທີ 10 ຂອງຄຳສັ່ງສະບັບນີ້ ໃນການອະນຸຍາດໃຫ້ສືບຕໍ່ດຳເນີນກິດຈະການທີ່ມີຄວາມຈຳເປັນ ໂດຍສະເພາະການກຳນົດຄວາມເປັນເອກະພາບໃນຄຳວ່າຮ້ານຂາຍເຄື່ອງຍ່ອຍ.

## ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:

1. ອະນຸຍາດໃຫ້ສືບຕໍ່ດຳເນີນກິດຈະການທີ່ມີຄວາມຈຳເປັນ ເປັນຕົ້ນ ຮ້ານຄ້າຂາຍຍົກ ແລະ ຮ້ານຄ້າຂາຍຍ່ອຍ ທີ່ຂາຍສິນຄ້າປະເພດສະບຽງອາຫານ, ເຄື່ອງອຸປະໂພກ-ບໍລິໂພກທີ່ຮັບໃຊ້ຊີວິດການເປັນຢູ່ປະຈຳວັນ, ຮ້ານຂາຍອຸປະກອນການແພດ, ຮ້ານຂາຍຢາ ທີ່ຕັ້ງຢູ່ ຫຼື ບໍ່ຕັ້ງຢູ່ ໃນສູນການຄ້າ, ຮ້ານສັບພະສິນຄ້າ, ຕະຫຼາດສົດ ຫຼື ຕະຫຼາດຂາຍເຄື່ອງກະສິກຳ;

2. ການຈຳໜ່າຍສິນຄ້າຢູ່ສູນການຄ້າ ແລະ ຮ້ານສັບພະສິນຄ້າທີ່ມີເຄື່ອງຫຼາຍປະເພດຢູ່ນຳກັນ ອະນຸຍາດໃຫ້ເປີດຈຳໜ່າຍສະເພາະຮ້ານຊຸບເປີ້ມາເກັດ ທີ່ຂາຍສິນຄ້າປະເພດສະບຽງອາຫານ, ເຄື່ອງອຸປະໂພກ-ບໍລິໂພກ, ຮ້ານຂາຍອຸປະກອນການແພດ, ຮ້ານຂາຍຢາ ນອກນັ້ນແມ່ນໃຫ້ປິດບໍລິການຊົ່ວຄາວ.

3. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເຮັດບົດບັນທຶກກັບບໍລິສັດນຳເຂົ້າ-ສົ່ງອອກ, ຂາຍຍົກ ຮັບປະກັນການສະໜອງສິນຄ້າສະບຽງອາຫານ ແລະ ສິນຄ້າອຸປະໂພກ-ບໍລິໂພກ ເພື່ອຮັບປະກັນການສະໜອງ ມີການເກັບຮັກສາເຄື່ອງຢູ່ໃນສາງໃຫ້ສາມາດກຸ້ມໄດ້ 1-2 ເດືອນ ເປັນຢ່າງຕ່ຳ ແລະ ໃຫ້ພະແນກ ຊ່ວຍອຳນວຍຄວາມສະດວກໃຫ້ບໍລິສັດດັ່ງກ່າວຂ້າງເທິງ ເພື່ອສາມາດເຮັດຫຼ້ອນພາລະບົດບາດດັ່ງກ່າວ.

4. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ **ກຳນົດຈຸດຈຳໜ່າຍສິນຄ້າ ປະເພດສະບຽງອາຫານ** ທີ່ເຫັນວ່າມີຄວາມຈຳເປັນ ແລະ ເໝາະສົມ ຕາມການແບ່ງຂັ້ນຄຸ້ມຄອງທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍຕະຫຼາດ, ຮັບປະກັນດ້ານລາຄາ ແລະ ການສະໜອງສິນຄ້າໃຫ້ໄດ້ປົກກະຕິ ແລະ ປະຕິບັດຕາມລະບຽບການຂອງຂະແໜງສາທາລະນະສຸກວາງອອກ ເພື່ອປ້ອງກັນ ແລະ ຫຼີກລ້ຽງການແຜ່ລະບາດຂອງພະຍາດໂຄວິດ 19. ສຳລັບຈຸດຈຳໜ່າຍສິນຄ້າທີ່ແຂວງ, ເມືອງບໍ່ໄດ້ກຳນົດ ແມ່ນໃຫ້ປິດຮ້ານຊົ່ວຄາວໃນໄລຍະນີ້;

5. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ຊຸກຍູ້ສົ່ງເສີມຜູ້ປະກອບການທີ່ມີເງື່ອນໄຂ ຂາຍສິນຄ້າຜ່ານສື່ອອນລາຍຕ່າງໆ ເພື່ອຫຼຸດຜ່ອນຄວາມແອອັດໃນການໄປຊື້ສິນຄ້າຕົວຈິງໃນຫ້ອງຕະຫຼາດ, ສູນການຄ້າ ແລະ ຮ້ານສັບພະສິນຄ້າ. ການຂາຍສິນຄ້າຕ້ອງຮັບປະກັນດ້ານຄຸນນະພາບ, ຄວາມສະອາດ ແລະ ຄວາມປອດໄພຂອງສິນຄ້າ ແລະ ຫ້າມເດັດຂາດບໍ່ໃຫ້ເກັງກຳໄລ ຫຼື ຂຶ້ນລາຄາສິນຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງອຸດສາຫະກຳ ແລະການຄ້າ;

6. ສຳລັບຮ້ານຂາຍຍົກ-ຂາຍຍ່ອຍທີ່ບໍ່ໄດ້ຈຳໜ່າຍສິນຄ້າປະເພດສະບຽງອາຫານ, ເຄື່ອງອຸປະໂພກ-ບໍລິໂພກ ຮ້ານຂາຍອຸປະກອນການແພດ, ຮ້ານຂາຍຢາ, ອຸປະກອນທີ່ຮັບໃຊ້ເຂົ້າໃນການຕ້ານ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ 19 ແມ່ນໃຫ້ປິດຮ້ານຊົ່ວຄາວ.

7. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ. ຖ້າຫາກການຈັດຕັ້ງປະຕິບັດພົບບັນຫາ ຫຼື ຂໍ້ຫຍຸ້ງຍາກ ໃຫ້ປະສານຫາຄະນະສະເພາະກິດຂອງແຂວງ, ເມືອງ ຂອງຕົນຂໍທິດຊີ້ນຳເພື່ອຄວາມເປັນເອກະພາບ ຫຼື ສາມາດສະເໜີຫາ ຄະນະສະເພາະກິດຂອງກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຮັບມືການແຜ່ລະບາດຂອງພະຍາດໂຄວິດ 19;

8. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ມີຜົນບັງຄັບໃຊ້ຈົນກວ່າພົ້ນວິກິດການ ການແຜ່ລະບາດຂອງພະຍາດໂຄວິດ 19 ຕາມການແຈ້ງການຂອງລັດຖະບານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຮ.ທ. ລັດຖະມົນຕີ

ສົມຈິດ ອິນທະມິດ

ລາຍລະອຽດຕິດຕໍ່ພົວພັນ:
- ທ່ານ ພົດສະເດດ ວົງວັດ
  ໂທ: 020 58225299
- ທ່ານ ບຸນພາມາ ວົງຄຳຊາວ
  ໂທ: 020 54142411